

## ການຊ່ວຍເຫລືອອາຫານ ແລະ ໂຄງການວຽກງານ ແລະ ການຝຶກຝົນທີ່ກ່ຽວຂ້ອງນຳ

ເງື່ອນໄຂຮັບເອົາສຳລັບອາຫານຈຳເປັນໄດ້ຖືກອີງໃສ່ລາຍໄດ້ປະຈຳເດືອນຂອງທ່ານ (ກ່ອນພາສີ) ແລະ ຂະໜາດຂອງຄອບຄົວຂອງທ່ານ. ພວກເຮົາຍັງເບິ່ງໃສ່ລາຍຈ່າຍຂອງທ່ານອີກຄືກັນ, ເຊັ່ນວ່າຄ່າເຊົ່າເຮືອນ ແລະ ຄ່າຝາກລູກ, ເພື່ອຈະພິຈາລະນາເບິ່ງວ່າການຊ່ວຍເຫລືອຂອງທ່ານຈະແມ່ນເທົ່າໃດ. ທ່ານສາມາດຮູ້ຈັກເພີ້ມເຕີມໄດ້ອີກ ແລະ ຂໍເອົາການຊ່ວຍເຫລືອ www.washingtonconnection.org.

ຖ້າຫາກວ່າທ່ານໄດ້ຮັບອາຫານຈຳເປັນ, ທ່ານອາດຈະມີເງື່ອນໄຂໄດ້ຮັບການບໍລິການຜ່ານໂຄງການວຽກງານ ແລະ ການຝຶກຝົນຂອງໂຄງການອາຫານຈຳເປັນ (BFET), ຊຶ່ງຈະເອົາກິຈກັມຕໍ່ລົງໄປນີ້ໃຫ້:

- ການຊອກວຽກທີ່ຖືກຄວບຄຸມເບິ່ງນຳ
- ການຝຶກຝົນການຊອກວຽກງານ
- ການສຶກສາວິຊາການຊ່າງ
- ການຝຶກຝົນຄວາມຊຳນານໃນຊີວິດ
- ການສຶກສາພື້ນຖານ
- ການບໍລິການຮັກສາວຽກງານໄວ້

BFET ໄດ້ຖືກເອົາໃຫ້ໂດຍອົງການທີ່ຕັ້ງຢູ່ໃນຊຸມນຸມຊົນ ແລະ ໂຮງຮຽນຄອນເຫລດການຊ່າງໃນຊຸມນຸມຊົນທ້ອງຖິ່ນທົ່ວຣັດວໍຊິງຕັນ. ເພື່ອລາຍລະອຽດເພີ້ມເຕີມກ່ຽວກັບເງື່ອນໄຂຮັບເອົາ, ກິຈກັມ, ແລະ ຈະຈົດຊື່ແນວໃດ, ທ່ານສາມາດແວ່ເຂົ້າປັຽມ www.dshs.wa.gov/bfet.

## ເງິນເຄຣດິດພາສີລາຍໄດ້ທີ່ເຮັດວຽກເອົາ

ເງິນເຄຣດິດພາສີລາຍໄດ້ທີ່ເຮັດວຽກເອົາ, (EITC) ຈະໃຫ້ຜົນປະໂຍດແກ່ຄອບຄົວເຮັດວຽກທີ່ມີລາຍໄດ້ຕ່ຳ. ທ່ານອາດຈະມີເງື່ອນໄຂໄດ້ຮັບເຖິງແມ່ນວ່າທ່ານຈະບໍ່ຕິດໜີ້ເງິນພາສີແນວໃດກໍຕາມ. ທ່ານຕ້ອງໄດ້ຍື່ນໃບພາສີລາຍໄດ້ທ້າຍປີ ແລະ ມີເງື່ອນໄຂທີ່ຈະໄດ້ຮັບເງິນເຄຣດິດ EITC.

ໄປທີ່ www.irs.gov/credits-deductions/individuals/earned-income-tax-credit ເພື່ອລາຍລະອຽດເພີ້ມເຕີມ.

Washington State Department of Social & Health Services

*Transforming lives*

DSHS 22-1586 LA (10/20) Laotian



# ການຜັນປ່ຽນຕໍ່ມາ ຈາກ TANF



## ຕຽມພ້ອມແລ້ວທີ່ຈະອອກຈາກໂຄງການ **TANF** ຫລື **WorkFirst** ບໍ່?

ອັນນີ້ສາມາດເປັນເວລາທີ່ນ່າຕື່ນເຕັ້ນ. ໂຄງການອູ້ມຊູ ແລະ ການບໍລິການຫລາຍໆຢ່າງຈະມີໄວ້ໃຫ້ຢູ່ໃນຊຸມນຸມຊົນຂອງທ່ານເພື່ອຈະຊ່ວຍເຫລືອໃນການຜັນປ່ຽນຕໍ່ມາຂອງທ່ານ. ມັນຈະລວມເອົາ:

- ການບໍລິການຟຣີສຳລັບຜູ້ທີ່ຊອກຫາວຽກຜ່ານ WorkSource ຢູ່ທີ່ກົມຄວາມປອດພັຍຂອງວຽກງານ
- ການຊ່ວຍເຫລືອອາຫານ ແລະ ວຽກງານ ແລະ ການຝຶກຝົນທີ່ກ່ຽວຂ້ອງນຳໂດຍຜ່ານກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ
- ການປິ່ນປົວສຸຂະພາບ
- ເງິນລ້ຽງລູກ
- ເຄຣດິດພາສີຣາຍໄດ້ເຮັດວຽກ

## ການບໍລິການສຳລັບຜູ້ທີ່ຊອກຫາວຽກ

ຢູ່ທີ່ www.worksourcewa.com, ທ່ານສາມາດພົບເຫັນ:

- ການເປີດຮັບສະມັກວຽກ
- ຍຸດທະວິທີສຳລັບການຊອກວຽກ
- ການຊ່ວຍເຫລືອນຳການຊອກວຽກ, ລວມທັງການຂຽນປະວັດຍໍ່ ແລະ ການຕຽມພ້ອມສຳລັບການສຳພາດ
- ບ່ອນທີ່ຈະຕິດປະກາດປະວັດຂອງທ່ານເພື່ອວ່ານາຍຈ້າງຈະເຫັນ
- ການຕີຣາຄາປະເມີນຜົນເບິ່ງຄວາມຊຳນານ
- ການແນະນຳສິ່ງຕໍ່ໄປຫາໂຄງການຝຶກຝົນ
- ໂຂງເຂດວຽກງານບ່ອນໃດທີ່ມີຄວາມຕ້ອງການສູງສຳລັບພະນັກງານ
- ສະຖານທີ່ຂອງ WorkSource Center ທ້ອງຖິ່ນຂອງທ່ານ, ທີ່ມີການເຂົ້າເຖິງຄອມພິວເຕີພ້ອມດ້ວຍການເຂົ້າເຖິງອິນເຕີແນດ, ໂທຣະສັບ, ເຄື່ອງອັດໂກປີ, ອື່ນໆ.

## ແຫລ່ງຊ່ວຍເຫລືອຕາມຊຸມນຸມຊົນ



The Washington Information Network, ເຂົ້າເຖິງໄດ້ໂດຍການບີບຫາເລກ 211, ຮັກສາຖານຂໍ້ມູນທົ່ວຣັດຂອງແຫລ່ງຊ່ວຍເຫລືອຕາມຊຸມນຸມຊົນ. ທ່ານສາມາດພົບເຫັນຣາຍຣະອຽດເພີ້ມເຕີມອີກໄດ້ຢູ່ທີ່ນີ້ : http://win211.org/

Washington Connection ເປັນແຫລ່ງຊ່ວຍເຫລືອຍິ່ງໃຫຍ່ອີກບ່ອນນຶ່ງ. ມັນສະເນີທົນທາງໃຫ້ທ່ານເພື່ອຈະຊອກເອົາ ແລະ ຂໍເອົາການບໍລິການ ແລະ ການຊ່ວຍເຫລືອຫລາຍໆຢ່າງທາງອອນລາຍນ໌. ທ່ານສາມາດພົບເຫັນຣາຍຣະອຽດເພີ້ມເຕີມອີກໄດ້ຢູ່ທີ່ນີ້: https://www.washingtonconnection.org/home/

## ການຊ່ວຍເຫລືອຄອບຄົວ

### ເງິນລ້ຽງລູກ

ພະແນກເກັບເງິນລ້ຽງລູກຂອງກົມສັງຄົມສົງເຄາະ ແລະ ສາທາຣະນະສຸກໄດ້ມຸ່ງຫມາຍຕໍ່ການໃຫ້ການບໍລິການທີ່ມີຜົນໃຊ້ໄດ້ເພື່ອຈະຊ່ວຍເຫລືອຄອບຄົວໃຫ້ຫລີກເວັ້ນຫລືຜ່ານຜ່າວົງຈອນຂອງຄວາມທຸກຍາກ. ມັນສາມາດຊ່ວຍ:

- ຊອກຫາພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ
- ກໍ່ຕັ້ງ,ດັດແປງ (ປ່ຽນແປງ) ,ຄວບຄຸມເບິ່ງນຳ ແລະ ບັງຄັບໃຊ້ຄຳສັ່ງຈ່າຍເງິນລ້ຽງລູກ
- ກໍ່ຕັ້ງສາຍເລືອດພໍ່ລູກ

ທ່ານຈະຕິດຕໍ່ຫາພະແນກນີ້ໄດ້ໂດຍການໂທຫາເລກ 1-800-442-5437 ຫລື ຜ່ານແວບໄຊທ໌ຂອງເຂົາເຈົ້າ, https://www.dshs.wa.gov/esa/division-child-support

### ແຫລ່ງຊ່ວຍເຫລືອການລ້ຽງລູກ

ທ່ານສາມາດຕິດຕໍ່ຫາ ParentHelp ໄດ້ຢູ່ທີ່ແວບໄຊທ໌ຂອງເຂົາເຈົ້າ, ParentHelp123.org ຫລື ໂດຍການໂທຫາ 1-800-322-2588. ມັນມີແຫລ່ງຊ່ວຍເຫລືອຫລວງຫລາຍ-ທຸກໆຢ່າງຈາກການຈະເຣີນເຕີບໂຕຂອງເດັກນ້ອຍໄປຫາຄຳແນະນຳກ່ຽວກັບສຸຂະພາບ ແລະ ການຊ່ວຍເຫລືອ.

### ການຝາກເດັກນ້ອຍ

ໂດຍຜ່ານໂຄງການ Working Connections Child Care, ທ່ານອາດຈະມີເງື່ອນໄຂໄດ້ຮັບການຊ່ວຍເຫລືອຝາກເດັກນ້ອຍໃນຂະນະທີ່ ທ່ານເຮັດວຽກຢູ່, ຫລື ຢູ່ໃນບາງກໍຣະນີໄປໂຮງຮຽນ. ທ່ານມີຜູ້ໃຫ້ການເບິ່ງແຍງເດັກນ້ອຍຫລາຍໆຊະນິດເພື່ອຈະເລືອກເອົາ.

ທ່ານສາມາດຂໍເອົາການຊ່ວຍເຫລືອໄດ້ທີ່ www.washingtonconnection.org ຫລືໂດຍກາ ນໂທຫາ 1-844-626-8687.

ເພື່ອຄວາມຊ່ວຍເຫລືອນຳການຊອກຫາຜູ້ໃຫ້ການເບິ່ງແຍງເດັກນ້ອຍທີ່ມີໃບອະນຸຍາດ, ຈົ່ງຕິດຕໍ່ຫາ Child Care Aware of Washington ໄດ້ທີ່ເລກ 1-800-446-1114 ຫລື www.childcare.org.

### ການປິ່ນປົວສຸຂະພາບ

ຖ້າຫາກວ່າທ່ານບໍ່ມີການຄຸ້ມກັນການປິ່ນປົວສຸຂະພາບ, ທ່ານສາມາດສະມັກຂໍເອົາໄດ້ຜ່ານ Washington Healthplanfinder ໂດຍ:

- ການໂທຫາເລກ 1-855-923-4633
- ການຂຽນປະກອບໃບຄຳຮ້ອງທາງອອນລາຍນ໌ຢູ່ທີ່ www.wahealthplanfinder.org
- ຖິ້ມໃບຄຳຮ້ອງທີ່ຖືກຂຽນປະກອບແລ້ວໄວ້ຢູ່ຕາມຫ້ອງການບໍລິການຊຸມນຸມຊົນ DSHS ທ້ອງຖິ່ນ